ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ປາຖະກະຖາ ວັນສ້າງຕັ້ງກຳມະບານລາວ




ຄະນະສະຫະພັນກຳມະບານຮາກຖານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປາຖະກະມູນເຊື້ອກຳມະບານລາວ ຄົບຮອບ 64 ປີ (ວັນທີ 1 ກຸມພາ 1956–ວັນທີ 1 ກຸມພາ 2020) ໃນທ້າຍເດືອນ ກຸມພາ 2020 ທີ່ຫ້ອງປະຊຸມທະນາຄານສົ່ງເສີມກະສິກຳ ສາຂາ ນະຄອນຫຼວງວຽງຈັນ, ໂດຍການໃຫ້ກຽດປາຖະກະຖາຂອງສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ ຄະນະພັກ ທຫລ, ຄະນະບໍລິຫານງານສະຫະພັນສູນກາງກຳມະບານລາວ, ປະທານສະຫະພັນກຳມະບານ ທຫລ, ຫົວໜ້າກົມບັນຊີ ແລະ ການເງິນ; ພ້ອມນີ້, ຍັງມີບັນດາຄະນະກົມ, ຄະນະກຳມະບານຮາກຖານ-ຄະນະໜ່ວຍ ແລະ ສະມາຊິກກຳມະບານ ທຫລ ເຂົ້າຮ່ວມ 70 ກວ່າສະຫາຍ.

ສະຫາຍປະທານສະຫະພັນກຳມະບານ ທຫລ ໄດ້ໃຫ້ກຽດເລົ່າຄືນມູນເຊື້ອຂອງວັນສ້າງຕັ້ງກຳມະບານລາວຄົບຮອບ 64 ປີ (ວັນທີ 1 ກຸມພາ 1956 - ວັນທີ 1 ກຸມພາ 2020) ຊຶ່ງອົງການກຳມະບານລາວໂດຍແມ່ນໄດ້ກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວໃນແຕ່ລະໄລຍະ ໂດຍສະເພາະປະຊາຊົນລາວບັນດາເຜົ່າໃນເມື່ອກ່ອນໄດ້ຖືກກົດຂີ່ຂູດຮີດແຮງງານຢ່າງໜັກໜ່ວງ, ພວກເຂົາໄດ້ບັງຄັບໃຫ້ກຳມະກອນລາວອອກແຮງງານ 14-16 ຊົ່ວໂມງ/ມື້, ອອກແຮງງານຫຼາຍໃຫ້ຄ່າຕອບແທນໜ້ອຍ, ຖືກຕັດເງິນເດືອນ, ຖືກທຸບຕີທໍລະມານຈາກນາຍທຶນ, ມີຄວາມສ່ຽງອັນຕະລາຍຕໍ່ການອອກແຮງງານ, ບໍ່ໄດ້ຮັບການດູແລທາງດ້ານສະຫວັດດີການສັງຄົມ, ບໍ່ໄດ້ຮັບການສຶກສາຮ່ຳຮຽນ; ຕໍ່ກັບສະພາບດັ່ງກ່າວ ກຳມະກອນລາວ, ຊາວຜູ້ອອກແຮງງານ ແລະ ປະຊາຊົນບັນດາເຜົ່າໄດ້ພ້ອມກັນລຸກຂຶ້ນຕໍ່ສູ້ຢ່າງອົງອາດກ້າຫານ ກາຍເປັນຂະບວນການອັນກວ້າງຂວາງນຳພາໂດຍບັນພະບູລຸດຜູ້ຮັກຊາດແຕ່ເໜືອຮອດໃຕ້ເພື່ອຕໍ່ສູ້ຕ້ານກັບພວກລ່າເມືອງຂຶ້ນຢ່າງດຸເດືອດ ແຕ່ຂະບວນການຕໍ່ສູ້ໃນໄລຍະນັ້ນບໍ່ໄດ້ຮັບໄຊຊະນະ ຍ້ອນບໍ່ມີພັກນຳພາ.

ມາເຖິງວັນທີ 1 ກຸມພາ 1956 ກົມການເມືອງສູນກາງພັກ ກໍ່ໄດ້ມີມະຕິຕົກລົງສ້າງຕັ້ງອົງການຈັດຕັ້ງກຳມະບານລາວຂຶ້ນຢ່າງເປັນທາງການຢູ່ເຂດທີ່ໝັ້ນແຂວງ ຫົວພັນ ໂດຍແມ່ນທ່ານ ສີສົມພອນ ລໍວັນໄຊ ເປັນຜູ້ຊີ້ນຳ. ຈາກນັ້ນອົງການຈັດຕັ້ງກຳມະບານ-ກຳມະກອນລາວໄດ້ກາຍເປັນກຳລັງຫຼວງໄດ້ປະກອບສ່ວນຢ່າງສົມກຽດເຂົ້າໃນການຕໍ່ສູ້ກູ້ຊາດເພື່ອຍາດເອົາເອກະລາດ ອິດສະລະພາບມາສູ່ປວງຊົນລາວທັງຊາດເຮັດໃຫ້ປະຊາຊົນຄົນລາວໄດ້ມີໂອກາດສ້າງເສດຖະກິດ, ແກ້ໄຂຊີວິດການເປັນຢູ່ດີຂຶ້ນເປັນກ້າວໆໂດຍຕະຫຼອດມາ.

 

ຢືນຢູ່ຕໍ່ໜ້າສະພາບການໃໝ່ ພາຍໃຕ້ແນວທາງອັນຖືກຕ້ອງຂອງພັກ ແລະ ລັດຖະບານ; ອົງການກຳມະບານ ທີ່ເປັນຕົວແທນແຫ່ງສິດຜົນປະໂຫຍດອັນຊອບທຳຂອງຖັນແຖວກຳມະກອນ ແລະ ຊາວອອກແຮງງານ ໄດ້ຮັບການເສີມຂະຫຍາຍຂຶ້ນໃນທຸກດ້ານ; ປະຈຸບັນ ອົງການກຳມະບານໄດ້ຮັບການຍົກສູງ ແລະ ພັດທະນາທາງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງເປັນກຳລັງຫຼັກແຫຼ່ງໜຶ່ງທີ່ມີລະດັບຄວາມຮູ້ສູງທາງດ້ານການເມືອງແນວຄິດ, ເປັນນັກຄົ້ນຄ້ວາ, ນັກວິທະຍາສາດ, ນັກເຕັກນິກວິຊາການທີ່ບັນຈຸຢູ່ໃນຂະແໜງວຽກທີ່ສຳຄັນຂອງລັດວິສາຫະກິດ ແລະ ພາກເອກະຊົນ, ບໍລິສັດ, ໂຮງຮຽນ-ໂຮງໝໍ, ໂຮງຈັກ-ໂຮງງານ, ຫົວໜ່ວຍການຜະລິດ ແລະບັນຈຸຢູ່ຕາມກົງຈັກພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆໃນທົ່ວປະເທດ ປະກອບສ່ວນຢ່າງຕັ້ງໜ້າ ແລະ ຂະຫຍັນຂັນແຂງໃນການນຳໃຊ້ເຕັກນິກວິທະຍາສາດເຂົ້າໃນການຜະລິດ, ສ້າງເສດຖະກິດກໍ່ຄືສ້າງນະວັດຕະກຳໃໝ່ຕາມທິດຫັນສູ່ທັນສະໄໝ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ຂຶ້ນຢ່າງບໍ່ຢຸດຢັ້ງ.

ໃນໂອກາດດັ່ງກ່າວ, ສະຫາຍ ເສີມທະວີ ສີຫາຟົນ ຄະນະບໍລິຫານງານກຳມະບານຮາກຖານ ທຫລ ໄດ້ຜ່ານບົດສະຫຼຸບລາຍງານການເຄື່ອນໄຫວວຽກງານປະຈຳປີ 2019 ຊຶ່ງມີທັງດ້ານດີ ເພື່ອເສີມຂະຫຍາຍໂດຍສະເພາະແມ່ນໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດຖືເອົາການຮ່ວມຊີວິດໜ່ວຍເປັນບ່ອນສຶກສາອົບຮົມ, ປະຕິບັດຄຳຂວັນ 5 ເປັນເຈົ້າ ແລະເຂົ້າຮັບຟັງການເຜີຍແຜ່ເອກະສານສຳຄັນຕ່າງໆ ອັນໄດ້ເຮັດໃຫ້ສະມາຊິກກຳມະບານ ມີຄຸນທາດການເມືອງໜັກແໜ້ນ, ມີສະຕິຕໍ່ການຈັດຕັ້ງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ລັດ ສາມາດເຮັດສຳເລັດໜ້າທີ່ການເມືອງ ແລະ ວຽກງານວິຊາສະເພາະດ້ວຍດີຕະຫຼອດມາແລະ ພ້ອມດຽວກັນນັ້ນ ກໍຍັງຈຳແນກໃຫ້ເຫັນຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຮັບການປັບປຸງແກ້ໄຂ ແລະ ໄດ້ຜ່ານທິດທາງແຜນການໃນຕໍ່ໜ້າ.

ປະຈຸບັນ ກຳມະບານຮາກຖານ ທຫລ ມີໜ່ວຍຮາກຖານຂຶ້ນກັບ ທັງໝົດ 20 ໜ່ວຍ, ມີສະມາຊິກກຳມະບານທັງໝົດ 890 ສະຫາຍ, ຍິງ 504 ສະຫາຍ ກວມ 56,62 % ຂອງຈຳນວນສະມາຊິກທັງໝົດ ແລະ ໃນຜ່ານມາ ບັນດາສະມາຊິກກຳມະບານ ໄດ້ເປັນເຈົ້າການປະຕິບັດວຽກງານວິຊາສະເພາະຕາມຂອບເຂດຄວາມຮັບຜິດຊອບໃນນີ້ໄດ້ເອົາໃຈໃສ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດ; ຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ມີຄວາມໝັ້ນຄົງ ມີຄວາມເຕີບໃຫຍທາງດ້ານປະລິມານ ແລະ ຄຸນນະພາບ; ຄຸ້ມຄອງລະບົບຊຳລະໃຫ້ມີປະສິດທິພາບ; ພັດທະນາພື້ນຖານໂຄງລ່າງຂະແໜງທະນາຄານໃຫ້ເປັນລະບົບຄົບຊຸດເປັນຕົ້ນດ້ານນິຕິກຳ, ດ້ານເຕັກໂນໂລຊີຂໍ້ມູນຂ່າວ, ພັດທະນາຕະຫຼາດທຶນ ແລະ ວຽກງານອື່ນໆ.

**# ຂ່າວ: ຣັດສະໝີ ດວງສັດຈະ**

**# ພາບ: ສົມພົດ ທຳມະວົງ**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ